เบื้อการคุ้มครองที่เข้มแข็ง PCAP2 LAO PDR For Better PIP Management

# ວາລະສານຂ່າວ PCAP2

ສະບັບທີ 9 ເດືອນ ພຶດສະພາ ປີ 2011

## ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການລົງທຶນຂອງລັດ

## Project for Enhancing Capacity in Public Investment Program (PIP) Management (PCAP2)

**ຂ່າວເດັ່ນ**

- ຄຳນຳ
- We've done it!! ການຝຶກອົບຮົມ PCAP2 ໄດ້ສິ້ນສຸດລົງ !
- ກອງປະຊຸມ JCC ຄັ້ງທີ່ 6 ໄດ້ໄຂຂຶ້ນແລ້ວ
- ແນະນຳຜູ້ຮັບຜິດຊອບວຽກງານ JICA ຄົນໃໝ່

*ບົດນຳ*

## ຂໍຂອບໃຈ! ແນ່ນອນຍີ່ປຸ່ນຕ້ອງຟື້ນຄືນກັບມາໄດ້

ໃນຕອນທີ່ເກີດເຫດການແຜ່ນດິນໄຫວຄັ້ງຫຍິ່ງໃຫຍ່ຂຶ້ນຢູ່ທີ່ປະເທດຢູ່ປຸ່ນ, ຂ້ອຍຢູ່ທີ່ແຂວງອຸດົມໄຊ ເພື່ອເຮັດວຽກກ່ຽວກັບການຝຶກອົບຮົມໃຫ້ກັບແຂວງ (OJT) . ຈາກການໄດ້ຮັບຟັງຂ່າວສານຕ່າງໆຈຶ່ງເຮັດໃຫ້ຂ້ອຍໄດ້ຮູ້ວ່າ ແຜ່ນດິນໄຫວຄັ້ງນີ້ໄດ້ສ້າງຄວາມເສຍຫາຍອັນໃຫຍ່ຫຼວງຂຶ້ນ ຈົນເຮັດໃຫ້ຂ້ອຍຮູ້ສຶກໝົດແຮງໄປໝົດ. ໃນສະພາບການທີ່ເປັນແບບນີ້ ຂ້ອຍຄວນຈະສືບຕໍ່ກິດຈະກຳການຝຶກອົບຮົມນີ້ຕໍ່ໄປດີຫຼືບໍ່ ນີ້ແມ່ນຄຳຖາມໜຶ່ງທີ່ເກີດຂຶ້ນໃນໃຈຂ້ອຍ.

ໃນຊ່ວງເວລານັ້ນເອງ, ຄຳເວົ້າຕ່າງໆຈາກບັນດາເພື່ອນຄົນລາວ ໄດ້ສ້າງກຳລັງໃຈໃຫ້ຂ້ອຍຂຶ້ນມາ. ຄຳເວົ້າຕ່າງໆນັ້ນເຫຼົ່ານັ້ນ ມີບາງຄຳໄດ້ສະແດງອອກຄືກັບເຫດການນີ້ ເກີດຂຶ້ນກັບຕົນເອງ ແລະພ້ອມທີ່ຈະແບ່ງປັນຄວາມທຸກໂສກ ເຊັ່ນ ພວກເຮົາຈະເຮັດຫຍັງໄດ້ແດ່ເພື່ອຊ່ວຍເຫຼືອຄົນຍີ່ປຸ່ນ, ມີບາງຄົນກໍ່ເວົ້າດ້ວຍສີໜ້າຍິ້ມແຍ້ມແຈ່ມໃສວ່າ ປະເທດຍີ່ປຸ່ນເປັນປະເທດທີ່ເຂັ້ມແຂງ ຕ້ອງສາມາດຟື້ນຄືນຈາກເຫດການນີ້ໄດ້ຢ່າງແນ່ນອນ. ຂ້ອຍຮູ້ສຶກວ່າ ທຸກຄຳເວົ້າຕ່າງໆເຫຼົ່ານັ້ນ ແມ່ນໄດ້ຖ່າຍທອດອອກມາດ້ວຍຄວາມຈິງໃຈແລະເຂັ້ມແຂງ ຢ່າງແທ້ຈິງ.

ຂ້ອຍຍັງໄດ້ຮັບຮູ້ຕື່ມອີກວ່າ ຈະມີການຈັດຕັ້ງການບໍລິຈາກຂຶ້ນ ຈາກຫົວໜ້າກົມກອງ ແລະພະນັກງານອ້ອມຂ້າງທັງໝົດຂອງກະຊວງແຜນການແລະການລົງທຶນ. ນອກຈາກນັ້ນທ່ານ ດຣ ບຸນທະວີ ສີສຸພັນທອງ ຜູ້ອຳນວຍການໂຄງການ ທັງເປັນລັດຖະມົນຕີຊ່ວຍວາການ ແລະ ທ່ານ ບຸນປອນ ສີສຸລາດ ຫົວກົມປະເມີນຜົນ, ຜູ້ບໍລິຫານໂຄງການ ກໍ່ໄດ້ກ່າວສະແດງຄວາມເສຍໃຈ ແລະໃຫ້ກຳລັງໃຈ ຕໍ່ປະຊາຊົນຍີ່ປຸ່ນໃນເຫດການຄັ້ງນີ້.

ຈາກຄຳເວົ້າສະໜັບສະໜຸນ ແລະ ການບໍລິຈາກທີ່ໄດ້ກ່າວໄວ້ຂ້າງເທິງ, ຊ່ຽວຊານຄົນຍີ່ປຸ່ນທັງໝົດຂໍຢືນຢັນອີກເທື່ອໜຶ່ງຕໍ່ບົດບາດໜ້າທີ່ຕົນໃນໂຄງການPCAP2. ພວກເຮົາເຊື່ອໝັ້ນວ່າ ພວກເຮົາຈະສາມາດເຮັດກິດຈະກຳຕ່າງໆຂອງໂຄງການ ໃຫ້ປະສົບຜົນສຳເລັດສູງສຸດ ເພື່ອເປັນການຕອບແທນຕໍ່ຄົນລາວ ທີ່ໄດ້ໃຫ້ກຳລັງໃຈ ຜ່ານຂໍ້ຄວາມ ແລະການບໍລິຈາກ. ກິດຈະກຳຕ່າງໆຂອງໂຄງການນີ້ ຈະກາຍເປັນມິດຕະພາບແລະຄວາມສາມັກຄີອັນແໜ້ນແກ່ນໃຫ້ແກ່ສອງປະເທດລາວ ແລະ ຍີ່ປຸ່ນ. ໂດຍເມື່ອຝ່າຍໜຶ່ງຕ້ອງການ ແລະອີກຝ່າຍໜຶ່ງສາມາດຕອບສະໜອງໃຫ້ໄດ້. ຂ້ອຍເຊື່ອວ່າສິ່ງນີ້ຈະກໍ່ໃຫ້ເກີດການຮ່ວມໄມ້ຮ່ວມມື ແລະການແລກປ່ຽນຂຶ້ນ. ຂໍຂອບໃຈຫຼາຍໆ, ແນ່ນອນຍີ່ປຸ່ນຕ້ອງຟື້ນຄືນກັບມາໄດ້. ປະເທດຍີ່ປຸ່ນຈະບໍ່ມີວັນລືມມິດຕະພາບອັນດີ ກັບປະເທດລາວ.

ຫົວໜ້າທີມທີ່ປຶກສາ ໂຄງການPCAP2 —



**ຂອບໃຈຫຼາຍໆທີ່ເຮັດໃຫ້ພວກເຮົາ**
**ມີຈິດໃຈເຂັ້ມແຂງຂຶ້ນ!**





# We've done it!! ການຝຶກອົບຮົມPCAP2 ໄດ້ສິ້ນສຸດລົງ !

(ຂຽນໂດຍ : ໂອກູມູຣາ)

ເມື່ອການດຳເນີນການຝຶກອົບຮົມຢູ່ແຂວງ (OJT) ໄດ້ສິ້ນສຸດລົງໃນເດືອນ ມີນາ ປີ 2011, ແຜນການຝຶກອົບຮົມທັງໝົດຂອງໂຄງການPCAP2ກໍ່ໄດ້ສິ້ນສຸດລົງເຊັ່ນດຽວກັນ.ໃນຂັ້ນຕໍ່ໄປ ພາກສ່ວນນີ້ຈະໄດ້ແນະນຳກິດຈະກຳການຝຶກອົບຮົມຕ່າງໆ ທີ່ເກີດໃນຊ່ວງປີ 2010/2011 ແບບຕໍ່ເນື່ອງ, ແລະຈະໄດ້ອະທິບາຍບົດບາດໜ້າທີ່ຂອງກະຊວງແຜນການແລະການລົງທຶນຕື່ມ.

## ການຝຶກອົບຮົມທົ່ວປະເທດໃນສົກປີ 2010/2011

ການຝຶກອົບຮົມ PCAP2 ໃນລະດັບທົ່ວປະເທດຄັ້ງນີ້ ແມ່ນເປັນຄັ້ງທີ່ 3 ໂດຍໄດ້ດຳເນີນພາຍໃຕ້ 3 ຫົວຂໍ້ໃຫຍ່ຄື 1. ຂັ້ນຕອນການວາງແຜນງົບປະມານຂອງ PIP ໃນປີຕໍ່ໄປ, 2. ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ພະແນກແຜນການ ຂອງແຂວງ ແລະ ອົງກອນລັດຖະບານເພື່ອໃຫ້ກາຍເປັນຜູ້ຊີ້ນຳ, ແລະ 3. ການໃຫ້ພະນັກງານພະແນກແຜນການຂອງແຂວງເປັນຜູ້ຮັບຜິດຊອບກ່ຽວກັບການຝຶກອົບຮົມໃນທ້ອງຖິ່ນຕົນ.

ເພື່ອໃຫ້ປະສົບຜົນສຳເລັດພາຍໃຕ້ສາມຫົວຂໍ້ດັ່ງກ່າວ ການຝຶກອົບຮົມໃນທົ່ວປະເທດໄດ້ແບ່ງອອກເປັນ 4 ລາຍການ. ໂດຍທີ່3 ລາຍການແມ່ນສຸມໃສ່ການຝຶກອົບຮົມແບບເອົາຈິງເອົາຈັງ, ແລະລາຍການສຸດທ້າຍແມ່ນການຝຶກອົບຮົມ (OJT) ໃນແຕ່ລະແຂວງ, ໂດຍການຝຶກອົບຮົມນີ້ແມ່ນເຮັດຢ່າງຕໍ່ເນື່ອງແລະມີການຕິດຕາມກວດກາຜົນ. ການຝຶກອົບຮົມ3 ລາຍການຕົ້ນນັ້ນ ໄດ້ມີຄົນເຂົ້າຮ່ວມຝຶກອົບຮົມທັງໝົດເຖິງ 1,500 ຄົນ.

| ຊື່ຫົວຂໍ້ອົບຮົມ | ຂະບວນການPIP ການສຳມະນາວ່າດ້ວຍການຈັດການການຊື້ | ການຝຶກອົບຮົມຜູ້ຝຶກສອນກ່ຽວກັບການບໍລິຫານຈັດການດ້ານ PIP | ການຝຶກອົບຮົມການຄຸ້ມຄອງ PIPໃຫ້ແກ່ພະແນກທີ່ສຳຄັນຂອງແຂວງ |
| --- | --- | --- | --- |
| **ເປົ້າໝາຍຂອງຜູ້ທີ່ຈະມາເຂົ້າຮ່ວມ** | ລະດັບຫົວໜ້າແລະຮອງຫົວໜ້າພະແນກ ແຜນການຂອງແຂວງ | ພະນັກງານພະແນກແຜນການຂອງອົງການແລະຈາກແຂວງ | ຜູ້ທີ່ກ່ຽວຂ້ອງກັບPIPທີ່ມາຈາກພະແນກຕົ່ຳຂອງແຂວງ |
| **ວັດຖຸປະສົງ** | ເພື່ອສຳເລັດການສ້າງແຜນງົບປະມານ PIPໃນສົກປີຕໍ່ໄປໃຫ້ແກ່ພະແນກແຜນການຂອງແຕ່ລະແຂວງ | ເພື່ອໃຫ້ພະນັກງານພະແນກແຜນການໄດ້ເຂົ້າໃຈເຖິງວິທີການສ້າງແຜນງົບປະມານ PIP ໃນປີຕໍ່ໄປ, ແລະເພື່ອໃຫ້ຄຳແນະນຳທີ່ເປັນປະໂຫຍດຕໍ່ວຽກງານທີ່ກ່ຽວກັບ PIP | ເພື່ອໃຫ້ເຂົ້າໃຈວິທີການຂຽນແບບຟອມກ່ຽວກັບຂະບວນການທັງໝົດຂອງງົບປະມານPIP ໃນປີຕໍ່ໄປ |
| **ໄລຍະເວລາການຝຶກອົບຮົມ (ຈຳນວນມື້ ຈຳນວນຄັ້ງ)** | ທ້າຍເດືອນ 11(2ມື້ 2 ເທື່ອ) | ກາງເດືອນ11ເຖິງທ້າຍເດືອນ12 (ແຕ່ລະຄັ້ງ5ມື້4ເທື່ອ) ເປົ້າໝາຍສຳນັກງານ ລັດຖະ ບານ | ກາງເດືອນ12ເຖິງຕົ້ນເດືອນ1 (ແຕ່ລະແຂວງໃຊ້ເວລາ 2ມື້) |
| **ຜູ້ສິດສອນ** | ຊ່ຽວຊານPCAP2ກະຊວງແຜນການ | ພະນັກງານກະຊວງແຜນການ ແລະການລົງທຶນ | ພະນັກງານຈາກພະແນກແຜນການຂອງແຂວງ |
| **ຜູ້ເຂົ້າຮ່ວມທັງໝົດ** | 66 | 138 | 811 |

ບົດສະຫຼຸບປະຈຳປີ 2010/2011

### ຫົວໜ້າ ພຜທ ແຂວງວຽງຈັນ

ຂ້ອຍເປັນສະມາຊິກສະພາຜູ້ໜຶ່ງ. ເຖິງແມ່ນວ່າຂ້ອຍມີວຽກງານຫຼາຍຢ່າງທີ່ຈະຕ້ອງສະສາງ ແຕ່ຂ້ອຍກໍ່ເຂົ້າຮ່ວມການຝຶກອົບຮົມສຳມະນາ PIP ທີ່ກ່ຽວກັບການຄຸ້ມຄອງດ້ານການເງິນຂອງໂຄງການລົງທຶນລັດໃນຄັ້ງນີ້. ຮອງຫົວໜ້າກົມຂອງ MPI ກ່າວອີກວ່າ ຂ້ອຍໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການເຂົ້າຮ່ວມນຳໂຄງການ ພິເສັບ 2 ແລະໂຄງການນີ້ເຮັດໃຫ້ຂ້ອຍບໍ່ມີຄວາມລັງເລໃຈໃນການເຮັດວຽກ.



## ຂັ້ນຕອນສະເໜີຂໍ PIP・ການຝຶກອົບຮົມການຄຸ້ມຄອງດ້ານການເງິນ

ໃນຊ່ວງການຝຶກອົບຮົມແບບຕໍ່ເນື່ອງໃນຄັ້ງນີ້, ໄດ້ມີການດຳເນີນການຝຶກອົບຮົມຂັ້ນຕອນການສະເໜີຂໍ PIP ແລະ ການຄຸ້ມຄອງດ້ານການເງິນຂອງໂຄງການລົງທຶນລັດຂຶ້ນ. ການຝຶກອົບຮົມ ແມ່ນໄດ້ວາງເປົ້າໝາຍໃນການສ້າງນະໂຍບາຍທາງດ້ານງົບປະມານ ໃນຊຸມປີຕໍ່ໄປ ໂດຍໃນທ້າຍເດືອນພະຈິກນີ້ ຈະໄດ້ມີການຈັດຫ້ອງຮຽນໃຫ້ແກ່ຜູ້ນຳທີ່ມາຈາກແຂວງຕ່າງໆແລະນະຄອນຫຼວງ ໂດຍໄດ້ຈັດຂຶ້ນທີ່ ນະຄອນຫຼວງວຽງຈັນເປັນເວລາ 2 ວັນ. ຜູ້ທີ່ເປັນອາຈານສອນແມ່ນຫົວໜ້າ ແລະ ຮອງຫົວໜ້າກົມແຜນການ MPI ແລະ ຊ່ຽວຊານຍີ່ປຸ່ນ. ມັນມີຄວາມຈຳເປັນເປັນຢ່າງຫຍິ່ງທີ່ຈະຕ້ອງພັດທະນານະໂຍບາຍງົບປະມານ PIP ຂອງສົກປີຕໍ່ໄປ ແລະ ການບໍລິຫານງົບປະມານ ແລະ ການເງິນ, ທັງນີ້ກໍ່ເພື່ອສ້າງຮ່າງລາຍການງົບປະມານ, ແລະເຮັດໃຫ້ຮ່າງລາຍການງົບປະມານນີ້ສອດຄ່ອງກັບແຜນນະໂຍບາຍງົບປະມານທີ່ໄດ້ສະເໜີມາໃນຫ້ອງຮຽນຂອງຫົວໜ້າ ແລະ ຮອງຫົວໜ້າພະແນກຂອງແຕ່ລະແຂວງທີ່ໄດ້ເຮັດສະເໜີໄວ້ໃນເບື້ອງຕົ້ນ.

## ການຝຶກອົບຮົມການຄຸ້ມຄອງໂຄງການລົງທຶນລັດ PIP, ໃຫ້ແກ່ພະນັກງານ ພຜທ ຂອງແຂວງ ແລະ ນະຄອນຫຼວງວຽງຈັນ

ການຝຶກອົບຮົມແບບດຽວກັນໃຫ້ແກ່ພະນັກງານພະແນກແຜນການທີ່ມາຈາກແຕ່ລະແຂວງ ແລະ ຈາກນະຄອນຫລວງ ໄດ້ໃຂຂຶ້ນໃນຊ່ວງເດືອນ 11 ຫາ ເດືອນ12 ທີ່ນະຄອນຫຼວງວຽງຈັນ. ບັນດາຄູຝຶກກໍ່ລ້ວນແລ້ວແຕ່ແມ່ນພະນັກງານຂອງ MPI ແລະ ຊ່ຽວຊານຝ່າຍລາວຂອງໂຄງການ PCAP2 ທີ່ມີປະສົບການ, ໄດ້ຜ່ານການສິດສອນ ແລະ ກໍ່ໄດ້ເຮັດການຝຶກອົບຮົມມາຫຼາຍຕໍ່ຫຼາຍຄັ້ງແລ້ວ. ໂດຍຜ່ານການຝຶກອົບຮົມໃນໄລຍະ 5 ມື້ນີ້, ແຜນການ ແລະ ແຜນງົບປະມານທີ່ສ້າງຂຶ້ນຈາກຫ້ອງຮຽນ ຫົວໜ້າ ແລະຮອງຫົວໜ້າພະແນກ ພຜທ ທີ່ໄດ້ກ່າວມາຂ້າງເທິງ ກໍ່ຈະໄດ້ເປັນເຈົ້າການນຳພາສ້າງແຜນງົບປະມານແບບລະອຽດ, ໂດຍເມື່ອພວກເຂົາກັບຄືນສູ່ເຂດແຂວງຂອງເຂົາເຈົ້າເອງແລ້ວ ຈະສາມາດກາຍເປັນຜູ້ສິດສອນ ເພື່ອດຳເນີນການຝຶກອົບຮົມໄຫ້ຄົນທ້ອງຖິ່ນຂອງພວກເຂົາເຈົ້າໄດ້. ໃນຂະບວນການຝຶກອົບຮົມ, ເພື່ອເຮັດໃຫ້ຜູ້ເຂົ້າຮຽນໄດ້ຄວາມຮູ້ກັບຄືນເມື່ອໄດ້ນັ້ນ ໄດ້ມີການເຮັດທົດສອບການສິດສອນຂຶ້ນ ໂດຍໃຫ້ຜູ້ທີ່ຫາກໍ່ຜ່ານການຝຶກອົບຮົບການເປັນຄູຝຶກຕ້ອງຂຶ້ນສອນຜູ້ມາຮ່ວມສຳມະນານຳກັນເປັນຄັ້ງທຳອິດ. ພວກເຂົາອາດຈະເກີດຄວາມຕື່ນເຕັ້ນ ແຕ່ກໍ່ສາມາດອະທິບາຍໄດ້ເປັນຢ່າງດີ.





## ການດຳເນີນການຈັດການPIP・ການຝຶກອົບຮົມຄູຝຶກສອນ～ເພື່ອພະນັກງານພະແນກວາງແຜນສູນກາງພັກ～

ໃນຊ່ວງຕົ້ນເດືອນ12 ເປັນເວລາທັງໝົດ 4 ມື້, ໄດ້ມີການຈັດການຝຶກອົບຮົມຄ້າຍຄືກັນນີ້ໃຫ້ແກ່ພະນັກງານພາກລັດທີ່ມາຈາກ 8 ກະຊວງທີ່ກ່ຽວຂ້ອງ, ໂດຍໃນການຝຶກອົບຮົມສຳມະນາໃນຄັ້ງນີ້ ພະນັກງານ ຈະເຮັດໜ້າທີ່ເປັນຜູ້ຝຶກສອນ ແລະໄດ້ມີການເນັ້ນໃສ່ການບັນຍາຍແລະການຝຶກຊ້ອມ ການວາງແຜນງົບປະມານໃນປີຕໍ່ໄປ ແລະ ວິທີການກວດສອບວຽກ. ໜ້າທີ່ຮັບຜິດຊອບຈາກສູນກາງພັກທີ່ກ່ຽວຂ້ອງກັບPIPກໍ່ຄື, ການປະສານສົມທົບ ແລະ ການນຳໃຊ້ເທັກໂນໂລຢີທີ່ຫຼາກຫຼາຍເຂົ້າໃນການຝຶກອົບຮົມ ຈຶ່ງເຮັດໃຫ້ຜູ້ຝຶກສອນແລະຜູ້ເຂົ້າຮ່ວມໄດ້ຮັບການສົນທະນາທີ່ມີຊີວິດຊີວາ ແລະ ມີປະສິດທິຜົນ.

## ການຝຶກອົບຮົມການບໍລິຫານ ແລະ ຈັດການ PIP ໃຫ້ແກ່ເຈົ້າຂອງງານ

ພາຍຫຼັງການຝຶກອົບຮົມໃຫ້ແກ່ຜູ້ສິດສອນທີ່ເປັນພະນັກງານມາຈາກພະແນກແຜນການຂອງແຕ່ລະແຂວງແລະນະຄອນຫຼວງແລ້ວ, ໃນຊ່ວງເດືອນ12ຫາເດືອນ 1ທີ່ຜ່ານມາ ພະນັກງານພະແນກແຜນການຂອງແຕ່ລະແຂວງແລະນະຄອນຫຼວງກໍ່ໄດ້ລົງໄປແຕ່ລະພະແນກການຕ່າງໆຂອງແຂວງຕົນ ແລະ ພະນັກງານທີ່ຮັບຜິດຊອບດ້ານ PIP ກໍ່ໄດ້ທຳການຝຶກອົບຮົມໃຫ້ແກ່ຜູ້ມາເຂົ້າຮ່ວມທັງໝົດ 50 ຄົນ. ການຝຶກອົບຮົມໃນໄລຍະເວລາ 2 ວັນດັ່ງກ່າວ ນອກຈາກພະແນກແຜນການໄດ້ສະເໜີ ກ່ຽວກັບນະໂຍບາຍ ແລະຂັ້ນຕອນ

ຂອງແຜນງົບປະມານ PIP ໃນສົກປີຕໍ່ໄປ, ຍັງໄດ້ຝຶກອົບຮົມຕົວຈິງກ່ຽວກັບການຂຽນແບບຟອມຂື້ນ. ພະນັກງານ MPI ຫຼັງຈາກຝຶກອົບຮົມແລ້ວ ຈະໄດ້ກັບຄືນໄປສະໜັບສະໜູນກິດຈະກຳຕ່າງໆໃນເຂດຕົນ. ພະແນກແຜນການຂອງແຕ່ລະແຂວງແລະນະຄອນຫຼວງວຽງຈັນ ໃນແຕ່ລະທີ່ແມ່ນມີການເຮັດວຽກ ແລະວິທີການນຳພາທີ່ມີລັກສະນະສະເພາະຂອງໃຜມັນ, ຈຶ່ງເຊື່ອໝັ້ນວ່າຜົນຂອງການຝຶກອົບຮົມຈະກໍ່ໃຫ້ເກີດການເຮັດວຽກທີ່ມີປະສິດທິພາບ.



## ພະນັກງານແມ່ຍິງ ແລະ ໄວໜຸ່ມທີ່ຫ້າວຫັນ !

ການເປີດການຝຶກອົບຮົມໃຫ້ແກ່ພະແນກແຜນການຂອງແຂວງ ແລະ ນະຄອນຫຼວງ ໃນເທື່ອນີ້ ສິ່ງທີ່ມີລັກສະນະພິເສດກ່ວາໝູ່ກໍ່ຄື ພະນັກງານທີ່ເປັນເອື້ອຍນ້ອງຍິງ ແລະ ໄວໜຸ່ມແມ່ນມີຄວາມຫ້າວຫັນເຂົ້າໃນການຝຶກອົບຮົມ. ບັນດາພະນັກງານທີ່ເປັນເອື້ອຍນ້ອງຍິງແມ່ນມີການຮຽນຮູ້ໄວ ຕັ້ງໃຈຟັງ ແລະ ຝຶກຝົນຢ່າງຕັ້ງໜ້າ. ບັນດາພະນັກງານໄວໜຸ່ມທັງຫຼາຍກໍ່ໄດ້ປະກອບສ່ວນຢ່າງມີຊີວິດຊີວາແລະມີບົດບາດສຳຄັນ ເຂົ້າໃນການຝຶກອົບຮົມຂັ້ນແຂວງ. ເພາະສະນັ້ນ ບໍ່ພຽງແຕ່ລະດັບຫົວໜ້າຂອງພຜທ, ແຕ່ຍັງມີບັນດາພະນັກງານຫຼາຍລະດັບທີ່ມາເຂົ້າຮ່ວມໃນການຝຶກອົບຮົມ, ໂດຍພວກເຂົາເຈົ້າໄດ້ປະກອບສ່ວນຢ່າງຕັ້ງໜ້າ ແລະ ເໝາະສົມເຂົ້າໃນການຄວບຄຸມເບິ່ງແຍງ PIP ຂອງແຕ່ລະພະແນກການ.



# ການຝຶກອົບຮົມກັບໜ້າວຽກ (OJT) ແລະ ການຕິດຕາມກວດກາ ປະຈຳປີ 2010/2011

ພາຍຫຼັງຜ່ານການຝຶກອົບຮົມໃນຫຼາຍຂັ້ນຕອນໄດ້ສິ້ນສຸດລົງ, ໄດ້ມີຈຸດປະສົງເພື່ອໃຫ້ມີການທົບທວນຄືນກ່ຽວກັບແຜນງານຕົວຈິງຂອງງົບປະມານປະຈຳປີແລະຂັ້ນຕອນການອອກງົບປະມານ, ດັ່ງນັ້ນຈຶ່ງມີແຜນທີ່ຈະຈັດໃຫ້ມີການຝຶກອົບຮົມໃນເດືອນ 2 ປີ 2011ໃຫ້ແກ່ຄະນະນຳຜູ້ສຳຄັນ ແລະໃນເດືອນ 3 ຈະຈັດໃຫ້ມີການຝຶກກັບໜ້າວຽກ ( O J T ) ແລະ ກິດຈະກຳການຕິດຕາມກວດກາຂຶ້ນ ໃຫ້ແກ່ພະນັກງານ MPI. ໂດຍໃນແຕ່ລະກະຊວງ ແລະ ໃນແຕ່ລະເຂດແຂວງຈະຕ້ອງໄດ້ນຳໃຊ້ງົບປະມານ PIP ໃຫ້ຖືກຕ້ອງ ໂດຍໃຊ້ເຄື່ອງມືໃນການປະຕິບັດການຈັດການ PIP ທີ່ໄດ້ກະກຽມໄວ້. ໂດຍສະເພາະແລ້ວ ຮູບແບບການກະກຽມຂອງແຕ່ລະກະຊວງ ແລະ ແຂວງຕ້ອງອອກແບບໃຫ້ສອດຄ່ອງ ແລະ ບໍ່ຊ້ຳຄວາມຄິດເດີມ ເພື່ອໃຫ້ມີການຈັດການທີ່ມີປະສິດທິຜົນ.

ເພື່ອໃຫ້ທັນກຳນົດເວລາຂອງກະຊວງ ແລະ ຂອງແຂວງ ຊຶ່ງແມ່ນວັນທີ15 ຂອງເດືອນ ມີນາ ນັ້ນ, ຈະຕ້ອງໄດ້ຍື່ນແບບຟອມ ທີ່ກ່ຽວຂ້ອງກັບງົບປະມານ MPI ແລະ PIP ທັງໝົດ. ນອກຈາກແບບຟອມທີ່ກ່ຽວຂ້ອງກັບງົບປະມານPIP ທີ່ໄດ້ຍື່ນໄປນັ້ນ ຍັງຈະຕ້ອງໄດ້ຕີລາຄາໂຄງການຂອງສ່ວນບຸກຄົນ ເພື່ອເຮັດໃຫ້ມັນມີປະສິດທິພາບສູງຂຶ້ນ. ນອກຈາກຜົນຂອງການຝຶກອົບຮົມແບບຕໍ່ເນື່ອງນີ້ແລ້ວ ພະນັກງານ ແລະ ຜູ້ທີ່ກ່ຽວຂ້ອງຂອງພະແນກຍັງໄດ້ເພີ່ມຄວາມຮັບຮູ້ແລະເຂົ້າໃຈກ່ຽວກັບການຈັດການຄວບຄຸມPIP ແລະກາຍເປັນໝາກຜົນໜຶ່ງຂອງການຝຶກອົບຮົມໃນເທື່ອນີ້.

## ການວາງແຜນດ້ວຍຕົນເອງ

ມີຫຼາຍແຂວງທີ່ສັງເກດເຫັນວ່າມີຄວາມສາມາດໃນການຈັດການແລະຄຸ້ມຄອງPIPຂອງແຂວງຕົນໄດ້. ມີບາງແຂວງ, ການອະນຸມັດງົບປະມານແມ່ນເຮັດໄດ້ດີ, ໂດຍໃນແຕ່ລະພະແນກ ງົບປະມານໄດ້ຮັບການຈັດສົ່ງໄປເປັນຢ່າງດີ. ສ່ວນໃນແຂວງອື່ນນັ້ນ, ໂດຍອີງໃສ່ແຜນພັດທະນາເສດຖະກິດສັງຄົມ (SEDP)ໄລຍະເວລາ 5 ປີ ຈະມີການກວດກາຄືນທຸກໄລຍະ 6 ເດືອນ, ຜົນທີ່ໄດ້ຮັບຈາກການຕິດຕາມກວດການີ້ຈະນຳໄປປະເມີນງົບປະມານ PIP ໃນປີຕໍ່ໄປ. ພິເສດໃນຫຼາຍໆແຂວງ ເພື່ອເປັນການສົ່ງເສີມພັດທະນາກຸ່ມບ້ານນັ້ນ, ຈະຕ້ອງມີການສະເໜີແບບຟອມແຜນການພັດທະນາຈາກແຂວງໃຫ້ສອດຄ່ອງກັບແຜນພັດທະນາກຸ່ມບ້ານ ແລະ ເພື່ອຫຼຸດຜ່ອນຄວາມທຸກຍາກໃນແຂວງທີ່ທຸລະກັນດານ.



ຈາກແຜນການດັ່ງກ່າວ, ມັນໄດ້ເຍືອງທາງໃຫ້ແກ່ການປັບປຸງການຈັດການ ແລະ ຄຸ້ມຄອງ PIP. ໂດຍທີ່ MPI/PCAP2 ຈະສືບຕໍ່ດຶງດູດເອົາແຜນການດັ່ງກ່າວຈາກພາກສະໜາມຕົວຈິງຈາກແຕ່ລະເຂດແຂວງ, ແລະ ພວກເຮົາຫວັງວ່າຈະສົ່ງເສີມ ແລະ ຊອກຫາແຜນທີ່ເປັນມາດຕະຖານເພື່ອຖ່າຍທອດໄປສູ່ແຂວງອື່ນໆ.

## ການສິ້ນສຸດການຝຶກອົບຮົມPCAP2 ແລະບົດບາດຂອງ MPI

PCAP2 ໄດ້ດຳເນີນການຝຶກອົບຮົມຂຶ້ນໃນທົ່ວປະເທດເປັນຄັ້ງທີ່ສາມ. ຈຳນວນການຝຶກອົບຮົມທັງໝົດມີຫຼາຍກ່ວາ 60 ເທື່ອ ມື້ທີ່ທຳການຝຶກອົບຮົມມີທັງໝົດຫຼາຍກ່ວາ 200 ມື້ ແລະຜູ້ມາເຂົ້າຮ່ວມທັງໝົດມີເຖິງ 2400 ຄົນ. ໃນແຕ່ລະປີ ໂຄງການ PCAP2 ແມ່ນໄດ້ເດີນທາງໄປທົ່ວປະເທດ ເພື່ອທຳການແນະນຳກ່ຽວກັບວິທີການຈັດການງົບປະມານທີ່ກ່ຽວຂ້ອງກັບ PIP ແລະການບໍລິຫານຈັດການ PIP. PCAP2 ໄດ້ດຳເນີນການຝຶກອົບຮົມຂຶ້ນໃນທົ່ວປະເທດເປັນຄັ້ງທີ່ສາມ. ຈຳນວນການຝຶກອົບຮົມທັງໝົດມີຫຼາຍກ່ວາ 60 ເທື່ອ ມື້ທີ່ທຳການຝຶກອົບຮົມມີທັງໝົດຫຼາຍກ່ວາ 200 ມື້ ແລະຜູ້ມາເຂົ້າຮ່ວມທັງໝົດມີເຖິງ 2400 ຄົນ. ໃນແຕ່ລະປີ ໂຄງການ PCAP2 ແມ່ນໄດ້ເດີນທາງໄປທົ່ວປະເທດ ເພື່ອທຳການແນະນຳກ່ຽວກັບວິທີການຈັດການງົບປະມານທີ່ກ່ຽວຂ້ອງກັບ PIP ແລະການບໍລິຫານຈັດການ PIP. ເຖິງແມ່ນວ່າສ່ວນຫຼາຍແລ້ວ ຫົວໜ້າແລະຮອງຫົວໜ້າ MPI ແມ່ນເປັນເທື່ອທຳອິດທີ່ໄດ້ເປັນຜູ້ຝຶກສອນ ແຕ່ພວກເຂົາກໍ່ມີບົດບາດສຳຄັນໃນການແນະນຳກ່ຽວກັບການຈັດຊື້ຕ່າງໆ. ພະນັກງານMPI ແມ່ນໄດ້ຮັບການພັດທະນາໂດຍຜ່ານການຝຶກອົບຮົມ, ພ້ອມກັນນັ້ນພວກເຂົາຍັງໄດ້ພັດທະນາການຝຶກອົບຮົມການຈັດການໃຫ້ແກ່ຕົວຂອງພວກເຂົາເຈົ້າເອງ.

| | ພະນັກງານຈາກພະແນກແຜນການຂອງແຂວງ | ພະນັກງານຈາກພະແນກແຜນການຂັ້ນສູນກາງ | ພະນັກງານຈາກພະແນກການຕ່າງໆຂັ້ນແຂວງ |
|---|---|---|---|
| **ຄັ້ງທີ່ 1 2008/2009** | 178 ຄົນ 14ແຂວງ | 69 ຄົນ 34 ພະແນກ | 338 ຄົນ 14ແຂວງ |
| **ຄັ້ງທີ່ 2 2009/2010** | 204 ຄົນ 17 ແຂວງ | 100 ຄົນ 33 ພະແນກ | 558 ຄົນ 17ແຂວງ |
| **ຄັ້ງທີ່ 3 2010/2011** | 103 ຄົນ 17 ແຂວງ | 35 ຄົນ 7ພະແນກທີ່ສຳຄັນ | 811 ຄົນ 17ແຂວງ |
| **ສະຫຼຸບ** | 485 | 204 | 1,707 |

ໃນປະຈຸບັນ MPI, ໂຄງການ PCAP2 ແມ່ນໂຄງການທີ່ລັດຖະບານລາວເຫັນວ່າ,ມີຄວາມສາມາດໃນການຝຶກອົບຮົມກ່ຽວກັບການຄຸ້ມຄອງPIPທີ່ມີຄຸນນະພາບສູງໃຫ້ແກ່ຜູ້ເຂົ້າຮ່ວມທີ່ມາຈາກ ພາກລັດຖະບານ ແລະໄດ້ຮັບການໄວ້ເນື້ອເຊື່ອໃຈຈາກລັດຖະບານແລະບັນດາແຂວງຕ່າງໆຕະຫຼອດມາ. ຫຼາຍໆການຝຶກອົບຮົມແມ່ນມາຈາກການຮຽກຮ້ອງຂອງລັດຖະບານແລະອົງກອນຂອງລັດຖະບານ. ພະນັກງານຂອງ MPI ໄດ້ຮັບການພັດທະນາຂຶ້ນມາໄດ້ກໍ່ຍ້ອນ ການຮ່ວມມືກັນ ລະຫວ່າງ MPI ກັບ JICA, PCAP2 ຈຶ່ງໄດ້ຍິນສຽງຮ້ອງຂໍຈາກແຕ່ລະແຂວງ ໃຫ້ມາແນະນຳເພີ່ມຕື່ມໃຫ້ອີກ.

# ກອງປະຊຸມJCC ຄັ້ງທີ່6ໄດ້ໄຂຂຶ້ນແລ້ວ

ກອງປະຊຸມ JCC ຄັ້ງທີ່ 6ໄດ້ໄຂຂຶ້ນ. ຈົນກ່ວາໂຄງການຈະສິ້ນສຸດລົງ
ພວກເຮົາໄດ້ຮັບຮູ້ຄວາມຄິດເຫັນທີ່ເປັນປະໂຫຍດຫຼາຍຫຼາຍຢ່າງຈາກສະຖານທີ່ຈັດກອງປະຊຸມ




**ກອງປະຊຸມຄະນະປະສານງານໂຄງການ (JCC) ຄັ້ງທີ 6 ລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ກັບ ອົງການຮ່ວມມືສາກົນຍີ່ປຸ່ນ**

ໃນວັນທີ 25 ເດືອນ ມີນາ 2011, ກອງປະຊຸມ JCC ຄັ້ງທີ່ 6 ກໍ່ໄດ້ໄຂຂຶ້ນທີ່ຫ້ອງປະຊຸມຂອງກະຊວງແຜນການ ແລະ ການລົງທຶນ. ເຂົ້າຮ່ວມຈາກຝ່າຍປະເທດລາວ ປະກອບມີ ດຣ ບຸນທະວີ ສີສຸພັນທອງ ລັດຖະມົນຕີຊ່ວຍວ່າການ, ທ່ານ ບຸນປອນ ສີສຸລາດ ຫົວໜ້າກົມປະເມີນຜົນ, ພ້ອມດ້ວຍບັນດາພະນັກງານຈາກ MPI ແລະບັນດາແຂກຈາກກະຊວງແລະທີ່ມາຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມ. ສ່ວນຝ່າຍທີ່ມາຈາກປະເທດຍີ່ປຸ່ນປະກອບມີ
ທ່ານໂຫມິຕະ ຮອງເລຂາຈາກສະຖານທູດຍີ່ປຸ່ນປະຈຳລາວ, ແລະ ທ່ານໄທກາວາ ຊຶ່ງເປັນຫົວໜ້າຫ້ອງການຂອງໂຄງການ JICA ປະຈຳລາວກໍ່ໄດ້ເຂົ້າຮ່ວມ. ໃນງານຄັ້ງນີ້ ແຂກຝ່າຍລາວ ພ້ອມກັບແຂກຝ່າຍປະເທດຍີ່ປຸ່ນ ຮ່ວມກັນມີທັງໝົດເຖິງ 30 ທ່ານທີ່ເຂົ້າຮ່ວມ. ໃນມື້ງານໄດ້ມີການນຳສະເໜີຜົນຂອງການດຳເນີນການຈັດຝຶກອົບຮົມ (O J T) ທີ່ຈັດໃຫ້ແກ່ຄະນະພຜທໃນແຕ່ລະແຂວງ, ການດຳເນີນກິດຈະກຳໂຄງການໃນໄລຍະຜ່ານມາ, ແລະແຜນການດຳເນີນງານໃນອະນາຄົດ. ໃນທີ່ປະຊຸມ, ໄດ້ມີຄຳຄິດເຫັນໃຫ້ມີການດຳເນີນການປະຕິບັດ PCAP3 ຕໍ່ໄປ ເພາະວ່າ ເມື່ອການພັດທະນາລະບົບການຈັດການວາງແຜນ PIP ຂອງຊຸມຊົນມີການພັດທະນາຂຶ້ນແລ້ວ, ການປະຕິບັດງານກໍ່ຈະສະດວກວ່ອງໄວຂຶ້ນ. (ຂຽນໂດຍ ນາກາມູລາ)

## ແນະນຳຜູ້ຮັບຜິດຊອບໂຄງການ JICA ຄົນໃໝ່



ຍິນດີທີ່ໄດ້ຮູ້ຈັກ, ຂ້ອຍຊື່ວ່າ ມິຢູລາ ອາຢາ, ເປັນພະນັກງານຫ້ອງການວາງແຜນແລະວິໃຈປະຈຳຢູ່ປະເທດລາວ. ຂ້ອຍໄດ້ເຂົ້າມາເຮັດວຽກນີ້ໃນຕົ້ນເດືອນ11ປີກາຍນີ້ ໂດຍມາແທນທີ່ ທ່ານຄິມູລາທີ່ຮັບຜິດຊອບໂຄງການPCAP2. ມື້ຜ່ານມາມັນເປັນມື້ທຳອິດທີ່ຂ້ອຍໄດ້ເຂົ້າຮ່ວມກອງປະຊຸມ JCC ຄັ້ງທີ 6, ຂ້ອຍມີຄວາມຮູ້ສຶກດີໃຈຫຼາຍທີ່ໄດ້ຮູ້ວ່າ ກິດຈະກຳທີ່ສະສົມມາຈາກໂຄງການຕ່າງໆ ບໍ່ວ່າຈະເປັນການປັບປຸງວິທີການຈັດການບໍລິຫານPIP, ການຈົດທະບຽນການລົງທຶນພາກລັດ, ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານທີ່ມາຈາກສູນກາງ ແລະ ຈາກແຂວງ ລ້ວນແລ້ວແຕ່ເຮັດໃຫ້ພະນັກງານ MPI ມີຄວາມໝັ້ນໃຈສູງຂຶ້ນ, ແລະ ຂ້ອຍເຊື່ອວ່າພວກເຂົາຈະສາມາດເຮັດໄດ້ໃນໂຄງການຕໍ່ໄປໃນອະນາຄົດ.

ໂຄງການນີ້ທ້າຍເດືອນ 8 ນີ້ ກໍ່ຈະສິ້ນສຸດລົງ, ໂດຍກ່ອນໜ້ານີ້ທີ່ປະເທດມາເລເຊຍ ການຝຶກອົບຮົມສຳມະນາທົ່ວປະເທດຄັ້ງທີ່3 ກໍ່ໄດ້ທຳການປະເມີນຜົນຂອງການສິ້ນສຸດໂຄງການ, ການເປີດການສຳມະນາຄັ້ງສຸດທ້າຍ, ແລະ ມີກິດຈະກຳຫຼາກຫຼາຍຢ່າງຕື່ມອີກ. ໂດຍສະເພາະແລ້ວການປະເມີນການສິ້ນສຸດໂຄງການ ຂ້ອຍກໍ່ມີແຜນທີ່ຈະໄດ້ເຂົ້າຮ່ວມເຊັ່ນດຽວກັນ ເພື່ອເບິ່ງຄືນຜົນຂອງການພັດທະນາໂຄງການໃນໄລຍະ 4 ປີ ທີ່ຜ່ານມາ. ເພື່ອເຮັດໃຫ້ວັດຖຸປະສົງຂອງໂຄງການປະສົບຜົນເປັນຈິງ, ຂ້ອຍຫວັງວ່າຈະໄດ້ຮັບການສະໜັບສະໜຸນຈາກຫ້ອງການຈະຕ້ອງມີຂຶ້ນຕໍ່ໄປ. ຂໍຂອບໃຈ.

### ● ບັນທຶກຈາກບັນນາທິການ ●

ໃນວັນທີ 11 ເດືອນ 3 ໄດ້ເກີດມີເຫດການແຜ່ນດິນໄຫວຄັ້ງຫຍິ່ງໃຫຍ່ຂຶ້ນທີ່ປະເທດຍີ່ປຸ່ນ. ຈາກເຫດການແຜ່ນດິນໄຫວຄັ້ງນີ້ ໄດ້ກໍ່ໃຫ້ເກີດຄື້ນຊຸນາມິຄື້ນໃຫຍ່、ຄື້ນຊຸນາມິລູກໃຫຍ່ທີ່ເກີດຂຶ້ນ ໄດ້ກືນເອົາບ້ານທີ່ຢູ່ຕາມຊາຍທະເລຂອງເຂດຕາເວັນອອກສຽງເໜືອ. ເຮືອນຂອງໝູ່ຮັກຂ້ອຍກໍ່ຖືກທຳລາຍໄປ, ແລະຍາດຕິພີ່ນ້ອງຂອງລາວກໍ່ຍັງຫາຍສາບສູນຢູ່. ຄົນໃນປະເທດຍີ່ປຸ່ນໄດ້ແຕ່ພຽງຫວັງເພື່ອໃຫ້ສະຖານະການດັ່ງກ່າວກັບຄືນມາສູ່ສະພາບປົກກະຕິໃຫ້ໄວເທົ່າທີ່ຈະໄວໄດ້, ເຊັ່ນດຽວກັບຄວາມຫວັງຂອງຊາວລາວ ແລະຊາວໂລກທີ່ມີໃຫ້ປະເທດຍີ່ປຸ່ນ. ປະຈຸບັນປະເທດຍີ່ປຸ່ນກຳລັງປະເຊີນກັບວິກິດການອັນຫຍິ່ງໃຫຍ່, ແຕ່ປະເທດຍີ່ປຸ່ນກໍ່ໄດ້ຮັບການສະໜັບສະໜຸນເປັນຢ່າງດີຈາກປະຊາຄົມຊາວໂລກ, ແນ່ນອນປະເທດຍີ່ປຸ່ນຕ້ອງຜ່ານຜົນສິ່ງນີ້ໄປໄດ້. ຂໍໃຫ້ທຸກທ່ານຈົ່ງເປັນກຳລັງໃຈແລະອວຍພອນໃຫ້ຍີ່ປຸ່ນຈົ່ງຜ່ານວິກິດການນີ້ໄປດ້ວຍດີ. Pray for JAPAN! (ຂຽນໂດຍ ນາກາມູລາ)

【ວາລະສານຂ່າວສະບັບຕໍ່ໄປ】ວາລະສານຂ່າວ PCAP2 ສະບັບຕໍ່ໄປກໍ່ຈະເປັນສະບັບສຸດທ້າຍແລ້ວ !
ພວກເຮົາຈະທົບທວນຄືນໃນຫຼາກຫຼາຍມູມຂອງໂຄງການໃນຊ່ວງໄລຍະເວລາ 4 ປີຜ່ານມາ. ຢ່າລືມສະບັບຕໍ່ໄປເດີ້ !
ຖ້າບັນດາທ່ານມີຄຳຄິດເຫັນ, ຄວາມຮູ້ສຶກ ແລະຄວາມຫ້ວງກ່ຽວກັບໂຄງການ, ພວກເຮົາຄ່ອຍທ່ານຢູ່

【ສອບຖາມລາຍລະອຽດ・ສົ່ງໄປສະນີໄດ້ທີ່】

- ຫ້ອງການໂຄງການ : Ministry of Planning and Investment, Avenue Souphanouvong, Vientiane
- ທີ່ຢູ່ໄປສະນີ : C/O JICA Laos Office, P.O.Box 3933, Avenue Souphanouvong, Vientiane
- ໂທ・ແຟກ : ＋856(0)21.243.687
- ອີເມລ: pcap2@icnet.co.jp
- ໂຮມເພດ : http://www.jica.go.jp/project/english/laos/0700667/index.html

ຂໍຂອບໃຈສຳລັບຄຳອວຍພອນແລະຄຳສະເໜີແນະຕ່າງໆ! ໂຄງການຍັງເຫຼືອເວລາພຽງແຕ່ 6 ເດືອນ, ພວກເຮົາຈົ່ງພ້ອມກັນເຮັດໃຫ້ໄດ້ດີທີ່ສຸດ! (ໂທໂມເອະ ໄທລາ)

